ກົດໝາຍວ່າດ້ວຍເຈົ້າຂອງເຮືອນເຊົ່າ-ຜູ້ເຊົ່າຂອງພອທແລນດ໌

ການສະໝັກ & ການຄັດເລືອກ

ຮຽນຮູ້ກ່ຽວກັບລະບຽບໃໝ່ໃຫ້ມາກ່ອນໄດ້ກ່ອນ ສຳລັບການສະໝັກຂໍເຊົ່າ, ໃຫ້ສິດກ່ອນ ແກ່ຜູ້ພິການດ້ານການເຄື່ອນໄຫວ, ຈຳກັດຄ່າທຳນຽມຄັດເລືອກ ແລະອັດຕາສ່ວນ ລະຫວ່າງລາຍໄດ້ກັບຄ່າເຊົ່າ, ແລະເວນການຄັດເລືອກແບບມີການກີດກັ້ນໜ້ອຍ.



Portland Housing Bureau
Rental Services Office

ຄວາມພິການດ້ານການເຄື່ອນໄຫວ ແລະ ການອຳນວຍຄວາມສະດວກໃຫ້ແກ່ຄວາມພິການ

ສຳລັບຂໍ້ມູນກ່ຽວກັບຄວາມພິການດ້ານການເຄື່ອນໄຫວ ແລະການອຳນວຍຄວາມສະດວກໃຫ້ແກ່ຄວາມພິການ, ເບິ່ງໜ້າ 5 ແລະ 18.

ສາລະບານ

ການໂຄສະນາ 4

ແຈ້ງການ 72 ຊົ່ວໂມງສຳລັບການມີທີ່ພັກໃຫ້ເຊົ່າ

ການເກັບ, ການດຳເນີນການ ແລະຄ່າທຳນຽມ 5

ຊ່ວງເປີດຮັບສະໝັກ

ກຳນົດເວລາສຳລັບການເກັບກຳ ແລະການດຳເນີນການ

ການຈຳກັດຄ່າທຳນຽມໃນການຄັດເລືອກ

ການຄັດເລືອກທົ່ວໄປ 8

ເອກະສານປະຈຳຕົວ

ລາຍໄດ້

ການຄັດເລືອກເພີ່ມເຕີມ 11

ພາບລວມຂອງທາງເລືອກຕ່າງໆ

ການກີດກັ້ນໜ້ອຍ

ທາງເລືອກສຳລັບເຈົ້າຂອງເຮືອນເຊົ່າ

ການປະຕິເສດ, ການອຸທອນ ແລະການຍອມຮັບ 17

ການຍົກເວັ້ນ 20

ມີຄຳຖາມບໍ?

ຖ້າວ່າ ທ່ານເປັນເຈົ້າຂອງເຮືອນເຊົ່າ ຫຼື ຜູ້ເຊົ່າ ທີ່ມີຄຳຖາມ ຫຼືຄວາມເປັນຫ່ວງກ່ຽວກັບກົດຄຳສັ່ງວ່າດ້ວຍການສະໝັກ ແລະການຄັດເລືອກ, ຫຼື ຊອກຫາຄຳແນະນຳທົ່ວໄປ, ຂໍໃຫ້ຕິດຕໍ່ ຫ້ອງການບໍລິການດ້ານການເຊົ່າຂອງ PHB. ໂທຣະສັບ, ອີເມວ, ຫຼື ໄປພົບດ້ວຍຕົນເອງ ໃນລະຫວ່າງຊົ່ວໂມງບໍລິການ.

ຫ້ອງການ ບໍລິການດ້ານການເຊົ່າ ພະແນກຊ່ວຍເຫຼືອທົ່ວໄປ

ໂທຣະສັບ	503-823-1303
ອີເມວ	rentalservices@portlandoregon.gov
ອອນລາຍ	portland.gov/rso
ໄປດ້ວຍຕົນເອງ	421 SW 6th Avenue, Suite 500 Portland, Oregon 97204
ຊົ່ວໂມງ	ທຸກວັນຈັນ, ວັນພຸດ & ວັນສຸກ 9-11:00**ໂມງເຊົ້າ** *ຮອດ* 1-4:00ໂມງບ່າຍ

EQUAL HOUSING OPPORTUNITY

*ເຈົ້າໜ້າທີ່ທີ່ **ຫ້ອງການບໍລິການດ້ານການເຊົ່າ** ຈະໃຫ້ຂໍ້ມູນກ່ຽວກັບ ກົດໝາຍຂອງເມືອງ ແລະນະໂຍບາຍ, ແລະແນະນຳຕໍ່ໄປ ຫາຂໍ້ມູນ ແລະແຫຼ່ງຊ່ວຍເຫຼືອອື່ນໆ. ຢ່າງໃດກໍຕາມ, ເຂົາເຈົ້າບໍ່ສາມາດສະເໜີໃຫ້ຄຳແນະນຳທາງກົດໝາຍ ຫຼື ບໍ່ສາມາດບອກໄດ້ວ່າ ຄວນເຮັດແນວໃດໃນສະຖານະການໃດໜຶ່ງ.*

ຊອກເບິ່ງ ເອກະສານ ແລະຟອມຕ່າງໆ ທາງອອນລາຍ

ຊອກເບິ່ງກົດລະບຽບການບໍລິຫານສະບັບເຕັມ, ຟອມ, ແລະແຈ້ງການທີ່ກຳນົດໄວ້ ທາງອອນລາຍທີ່ **portland.gov/rso/application-screening**

ຄຳຖາມທີ່ຖາມເລື້ອຍໆ

ທ່ານຈະພົບຄຳຕອບສຳລັບຄຳຖາມທີ່ຖາມເລື້ອຍໆ ຕໍ່ໄປນີ້. ໃຫ້ຊອກເບິ່ງກ່ອງສີຟ້າ ຫຼື ຮ້ອງຂໍເອົາການຊ່ວຍເຫຼືອ

ໃບສະໝັກຕ້ອງປະກອບໄປດ້ວຍຫຍັງແດ່? - 4

ຜູ້ສະໝັກສາມາດຮ້ອງຂໍເອົາບັນທຶກໃບຮັບໄດ້ບໍ່? - - - - - - - - - - - - - - - - - - 5

ການສະໝັກມີຂັ້ນຕອນດຳເນີນການແນວໃດແດ່? - - - - - - - - - - - - - - - - - 6

ໃນກໍລະນີໃດແດ່ທີ່ເຈົ້າຂອງເຮືອນເຊົ່າສາມາດປະຕິເສດທີ່ຈະດຳເນີນການກັບໃບສະໝັກ? - 7

ຮູບແບບຂອງເອກະສານປະຈຳຕົວແນວໃດແດ່ທີ່ເຈົ້າຂອງເຮືອນເຊົ່າຍອມຮັບໄດ້? - - - - - 8

ມີການປະເມີນອັດຕາສ່ວນລະຫວ່າງລາຍໄດ້ກັບຄ່າເຊົ່າແນວໃດແດ່? - - - - - - - - 10

ຈະເຮັດແນວໃດ ຖ້າວ່າ ຜູ້ສະໝັກບໍ່ມີຄຸນສົມບັດກົງຕາມ ເກນອັດຕາສ່ວນດ້ານລາຍໄດ້ຂັ້ນຕ່ຳ? - 10

ການພິຈາລະນາຕັດສິນຈະຖືກແຈ້ງໃຫ້ຮູ້ເມື່ອໃດ ແລະແນວໃດແດ່? - - - - - - - - - 17

ຈະເຮັດແນວໃດ ຖ້າວ່າ ຜູ້ເຊົ່າທີ່ບໍ່ໄດ້ເປັນຜູ້ສະໝັກຖືກປະຕິເສດ? - - - - - - - - - - 18

ແຈ້ງການປະຕິເສດຕ້ອງປະກອບດ້ວຍຫຍັງແດ່? - - - - - - - - - - - - - - - - - 18

ການໂຄສະນາ

ແຈ້ງການ 72 ຊົ່ວໂມງສຳລັບການມີທີ່ພັກໃຫ້ເຊົ່າ

ເມື່ອໂຄສະນາຕໍ່ສາທາລະນະ, ເຈົ້າຂອງເຮືອນເຊົ່າຕ້ອງປະກາດແຈ້ງ ໃຫ້ຮູ້ 72 ຊົ່ວໂມງ**ກ່ຽວກັບການມີທີ່ພັກໃຫ້ເຊົ່າ** ກ່ອນເລີ່ມຕົ້ນຮັບໃບສະໝັກ. ໃບປະກາດແຈ້ງຕ້ອງລະບຸ:

a) ເມື່ອໃດທີ່ຈະເລີ່ມຮັບໃບສະໝັກ (ຫຼັງຈາກ 72 ຊົ່ວໂມງ);

b) ທີ່ພັກອາໄສນັ້ນສາມາດເຂົ້າເຖິງໄດ້ຫຼືບໍ່;* ແລະ

c) ຄ່າທຳນຽມການຄັດເລືອກ (ຖ້າວ່າມີການເກັບຄ່າທຳນຽມ), ແລະລາຍລະອຽດຂອງເກນການຄັດເລືອກ.

**ທີ່ພັກອາໄສທີ່ສາມາດເຂົ້າເຖິງໄດ້ (Accessible Dwelling Units) ມີຄຸນສົມບັດເປັນ "ທີ່ພັກອາໄສປະເພດ A" ສອດຄ່ອງຕາມກົດການສ້າງອາຄານຂອງຣັຖອໍຣິກອນ ແລະ ICC A117.1. ໂດຍທົ່ວໄປແລ້ວ, ທີ່ພັກອາໄສປະເພດ A ມີຮູບແບບ ແລະການກໍ່ສ້າງທີ່ໃຫ້ມີທາງເຂົ້າອອກໃນອາຄານສຳລັບຜູ້ໃຊ້ຣົຖລໍ້ໃນທົ່ວອາຄານ.*

ໃບສະໝັກຕ້ອງປະກອບໄປດ້ວຍຫຍັງແດ່?



- ☐ ໂອກາດໃນການຢືນຢັນຄວາມພິການດ້ານການເຄື່ອນໄຫວ ຫຼື ສະຖານະຄວາມພິການອື່ນໆ
- ☐ ແຈ້ງການຂອງເມືອງພອທແລນດ໌ສຳລັບບັນດາຜູ້ສະໝັກ ຊຶ່ງກ່ຽວຂ້ອງກັບສິດທິຂອງຜູ້ເຊົ່າໃນການຮ້ອງຂໍໃຫ້ມີການດັດແປງ ຫຼື ການອຳນວຍຄວາມສະດວກ
- ☐ ແຈ້ງການຂອງເມືອງພອທແລນດ໌ສຳລັບບັນດາຜູ້ສະໝັກ ກ່ຽວກັບບ່ອນທີ່ສາມາດຂໍຮັບເອົາເອກະສານເລື່ອງສິດທິຂອງຜູ້ສະໝັກຂອງອົງການດູແລທີ່ພັກອາໄສຂອງພອທແລນດ໌ (PHB)
- ☐ ລາຍລະອຽດຂອງເກນການຄັດເລືອກ ແລະຂັ້ນຕອນການປະເມີນຜົນ, ຖ້າວ່າ ມີການເກັບຄ່າທຳນຽມການຄັດເລືອກ
- ☐ ໂອກາດໃນການຍື່ນເອກະສານຫຼັກຖານເພີ່ມເຕີມເພື່ອການພິຈາລະນາ, ເພື່ອຫຼຸດຜ່ອນໂອກາດໃນການໄດ້ຜົນການຄັດເລືອກເປັນລົບ

  ເຈົ້າຂອງເຮືອນເຊົ່າສາມາດໃຫ້ຂໍ້ມູນນີ້ໄດ້ ໂດຍການໃຫ້ທີ່ຢູ່, ລິ້ງຄ໌ອິນເຕີເນັດ, ຫຼື ວິທີທາງອື່ນໆ ທີ່ຜູ້ສະໝັກທີ່ຄາດຫວັງໄວ້ສາມາດຫາຂໍ້ມູນນີ້ໄດ້.

ເບິ່ງຟອມແລະເອກະສານຕ່າງໆ ທາງອອນລາຍ
portland.gov/rso/application-screening

★ **ແນວທາງປະຕິບັດທີ່ດີທີ່ສຸດ**ເຖິງວ່າບໍ່ຈຳເປັນ, ແຕ່ມັນກໍເປັນແນວທາງປະຕິບັດທີ່ດີທີ່ສຸດທີ່ຈະໃຫ້ມີຂໍ້ມູນກ່ຽວກັບ**ສິດທິໃນການອຸທອນ**ໃນໃບສະໝັກ.

ກຸ່ານເກັບກຳ, ການດຳເນີນການ ແລະ ຄ່າທຳນຽມ

ຊ່ວງເປີດຮັບສະໝັກ

ຊ່ວງລະຍະເປີດຮັບສະໝັກ ເລີ່ມຢ່າງໜ້ອຍ 72 ຊົ່ວໂມງຫຼັງຈາກມີການຕິດປະກາດແຈ້ງການໃຫ້ເຊົ່າ. ໃນຕອນເລີ່ມເປີດຮັບສະໝັກນັ້ນ, ທາງເຈົ້າຂອງເຮືອນເຊົ່າຈະຕ້ອງບັນທຶກວັນທີ ແລະເວລາ ທີ່ໄດ້ຮັບໃບສະໝັກແຕ່ລະໃບທີ່ປະກອບຄົບຖ້ວນແລ້ວນັ້ນ. ເຈົ້າຂອງເຮືອນເຊົ່າອາດດຳເນີນການພິຈາລະນາໃບສະໝັກາຫຼາຍໃບພ້ອມກັນ ແຕ່ວ່າຕ້ອງຍອມຮັບ, ຍອມຮັບແບບມີເງື່ອນໄຂ, ຫຼື ປະຕິເສດຕາມລຳດັບໃບສະໝັກທີ່ໄດ້ຮັບ.

ຜູ້ສະໝັກສາມາດຮ້ອງຂໍເອົາບັນທຶກໃບຮັບໄດ້ບໍ?

ຖ້າວ່າ ຜູ້ສະໝັກຮ້ອງຂໍເອົາບັນທຶກການໄດ້ຮັບ ທາງເຈົ້າຂອງເຮືອນເຊົ່າຕ້ອງຈັດຫາຂໍ້ມູນນີ້ໃຫ້, ລວມເຖິງ ວັນທີແລະເວລາທີ່ໄດ້ຮັບ, **ພາຍໃນຫ້າວັນເຮັດວຽກ** ນັບແຕ່ໄດ້ຮັບຄຳຮ້ອງຂໍ.

ຖ້າວ່າ ໄດ້ຮັບໃບສະໝັກກ່ອນຮອດຊ່ວງເວລາເປີດຮັບສະໝັກ, ເຈົ້າຂອງເຮືອນເຊົ່າຈະຕ້ອງບັນທຶກວັນທີ ແລະເວລາ ທີ່ໄດ້ຮັບໃບສະໝັກທີ່ປະກອບຄົບຖ້ວນແລ້ວເຫຼົ່ານີ້ເປັນ 8 ຊົ່ວໂມງຫຼັງຈາກເລີ່ມເປີດຮັບສະໝັກ ໃນຖານະເປັນການລົງໂທດ.

ລາຍຊື່ລໍຖ້າ

ຖ້າວ່າ ເຈົ້າຂອງເຮືອນເຊົ່າມີລາຍຊື່ລໍຖ້າເຊົ່າທີ່ພັກອາໄສ, ລາຍຊື່ນັ້ນຕ້ອງລຽງຕາມລຳດັບທີ່ໄດ້ຮັບ. ເມື່ອຜູ້ທີ່ມີລາຍຊື່ໃນລາຍຊື່ລໍຖ້ານັ້ນ ສະໝັກຂໍເຊົ່າ, ເຈົ້າຂອງເຮືອນເຊົ່າອາດດຳເນີນການພິຈາລະນາໃບສະໝັກາຫຼາຍໃບພ້ອມກັນໄດ້ ແຕ່ວ່າຕ້ອງຍອມຮັບ, ຍອມຮັບແບບມີເງື່ອນໄຂ, ຫຼື ປະຕິເສດໃບສະໝັກ ໃນຮູບແບບຕາມລຳດັບໃບສະໝັກທີ່ໄດ້ຮັບນັ້ນ.

ການໃຫ້ສິດກ່ອນແກ່ປະຊາຊົນຜູ້ພິການດ້ານການເຄື່ອນໄຫວ*

ໃນລະຫວ່າງ 8 ຊົ່ວໂມງທຳອິດຂອງການເປີດຮັບສະໝັກ, ເມື່ອເຈົ້າຂອງເຮືອນເຊົ່າໄດ້ຮັບໃບສະໝັກທີ່ມີສະມາຊິກໃນຄົວເຮືອນເປັນຜູ້ພິການດ້ານການເຄື່ອນໄຫວ, ເຈົ້າຂອງເຮືອນເຊົ່າຕ້ອງໃຫ້ໂອກາດແກ່ຜູ້ສະໝັກດັ່ງກ່າວນີ້, ແລະຍອມຮັບ, ຍອມຮັບແບບມີເງື່ອນໄຂ, ຫຼື ປະຕິເສດຜູ້ສະໝັກເຫຼົ່ານີ້ ກ່ອນທີ່ຈະພິຈາລະນາໃບສະໝັກອື່ນໆ. ຖ້າວ່າມີຫຼາຍໃບສະໝັກທີ່ມີສະມາຊິກໃນຄົວເຮືອນເປັນຜູ້ພິການດ້ານການເຄື່ອນໄຫວ, ການດຳເນີນການພິຈາລະນາຕ້ອງເປັນໄປຕາມລຳດັບໃບສະໝັກທີ່ໄດ້ຮັບ, ແຕ່ຕ້ອງກ່ອນທີ່ຈະດຳເນີນການກັບໃບສະໝັກສຳລັບຄົວເຮືອນທີ່ບໍ່ມີສະມາຊິກເປັນຜູ້ພິການດ້ານການເຄື່ອນໄຫວ.

**ກົດລະບຽບນີ້ນຳໃຊ້ໄດ້ສະເພາະກັບທີ່ພັກອາໄສທີ່ເຂົ້າເຖິງໄດ້ (ປະເພດ A), ແລະນຳໃຊ້ບໍ່ໄດ້ກັບໃບສະໝັກສຳລັບທີ່ພັກອາໄສທີ່ໃຫ້ເຊົ່າຜ່ານລັອຕເຕີຣີ່ ຫຼື ລະບົບການເຂົ້າເຖິງແບບມີການປະສານງານ ສຳລັບອາຄານທີ່ພັກອາໄສທີ່ມີຄ່າເຊົ່າທີ່ 80% MFI ຫຼື ຕ່ຳກວ່າ.*

ກຳນົດເວລາສຳລັບການເກັບກຳ ແລະການດຳເນີນການ

ປະກາດ 72 ຊົ່ວໂມງ ຂອງການມີທີ່ພັກອາໄສໃຫ້ເຊົ່າ

ຖ້າວ່າ ມີການໂຄສະນາການເປີດຮັບສະໝັກ, ຕ້ອງຕິດປະກາດແຈ້ງ ການມີທີ່ພັກໃຫ້ເຊົ່າ 72 ຊົ່ວໂມງລ່ວງໜ້າກ່ອນຊ່ວງເປີດຮັບສະໝັກ.

ຊ່ວງເປີດຮັບສະໝັກ

ຊ່ວງເປີດຮັບສະໝັກເລີ່ມຢ່າງໜ້ອຍ 72 ຊົ່ວໂມງ ຫຼັງຈາກຕິດປະກາດແຈ້ງການມີທີ່ພັກໃຫ້ເຊົ່າ, ແລະ ການດຳເນີນການພິຈາລະນາໃບສະໝັກຕ້ອງໄດ້ເຮັດຕາມລຳດັບທີ່ໄດ້ຮັບ. ຜູ້ສະໝັກທີ່ພິການດ້ານການເຄື່ອນໄຫວ ຈະໄດ້ຮັບຂໍ້ມູນພິເສດກ່ຽວກັບທີ່ພັກອາໄສທີ່ສາມາດເຂົ້າເຖິງໄດ້.

ປິດລົງໂທດ 8 ຊົ່ວໂມງ

ຖ້າວ່າ ໄດ້ຮັບໃບສະໝັກກ່ອນຮອດຊ່ວງເວລາເປີດຮັບສະໝັກ, ການສະໝັກນັ້ນຕ້ອງຕົກຢູ່ພາຍໃຕ້ປົດລົງໂທດ 8 ຊົ່ວໂມງ ແລະໄດ້ຮັບການດຳເນີນການພິຈາລະນາຕາມລຳດັບທີ່ໄດ້ຮັບ.

ລຳດັບຂອງການດຳເນີນການພິຈາລະນາໃບສະໝັກ

0. ບໍ່ມີການຍອມຮັບໃບສະໝັກຈົນກວ່າຈະຮອດຢ່າງໜ້ອຍ 72 ຊົ່ວໂມງ ຫຼັງຈາກການຕິດປະກາດແຈ້ງໃຫ້ຮູ້ເຖິງການມີທີ່ພັກອາໄສໃຫ້ເຊົ່າ. ໃບສະໝັກທີ່ໄດ້ຮັບໃນລະຫວ່າງຊ່ວງເວລານີ້ແມ່ນຕົກຢູ່ພາຍໃຕ້ປົດລົງໂທດ 8 ຊົ່ວໂມງ.
1. ໃບສະໝັກທີ່ລະບຸວ່າພິການດ້ານການເຄື່ອນໄຫວ ແລະໄດ້ຮັບໃນລະຫວ່າງ 8 ຊົ່ວໂມງທຳອິດຂອງຊ່ວງລະຍະເປີດຮັບສະໝັກ ຈະໄດ້ຮັບໂອກາດໄດ້ຮັບການພິຈາລະນາກ່ອນ, ຕາມລຳດັບທີ່ໄດ້ຮັບ.*
2. ໃບສະໝັກທີ່ລະບຸວ່າພິການດ້ານການເຄື່ອນໄຫວ ແລະໄດ້ຮັບ *ກ່ອນຮອດ* ຊ່ວງລະຍະເປີດຮັບສະໝັກ, ຕາມລຳດັບທີ່ໄດ້ຮັບ.*
3. ໃບສະໝັກທີ່ໄດ້ຮັບໃນລະຫວ່າງ 8 ຊົ່ວໂມງທຳອິດຂອງຊ່ວງລະຍະເປີດຮັບສະໝັກ, ຕາມລຳດັບທີ່ໄດ້ຮັບ.
4. ໃບສະໝັກທີ່ໄດ້ຮັບ *ກ່ອນຮອດ* ຊ່ວງລະຍະເປີດຮັບສະໝັກ ຈະໄດ້ຮັບການດຳເນີນການຕາມປົດລົງໂທດ 8 ຊົ່ວໂມງ, ຕາມລຳດັບທີ່ໄດ້ຮັບ.
5. ໃບສະໝັກອື່ນໆ ທັງໝົດ, ຕາມລຳດັບທີ່ໄດ້ຮັບ.

**ກົດນີ້ແມ່ນໃຊ້ໄດ້ສະເພາະກັບທີ່ພັກອາໄສທີ່ສາມາດເຂົ້າເຖິງໄດ້.*

ຄຳແນະນຳເລັກນ້ອຍສຳລັບຜູ້ສະໝັກ

ລໍຖ້າຈົນຮອດຊ່ວງລະຍະເປີດຮັບສະໝັກກ່ອນ ແລ້ວຈຶ່ງສະໝັກ! ຖ້າວ່າ ໄດ້ຮັບໃບສະໝັກກ່ອນຮອດຊ່ວງລະຍະເປີດຮັບສະໝັກ, ຈະຕ້ອງມີການນຳໃຊ້ປົດລົງໂທດ 8 ຊົ່ວໂມງ.

ການຈຳກັດຄ່າທຳນຽມການຄັດເລືອກ*

ສະຖານະການ	ຂີດຈຳກັດສູງສຸດທີ່ອະນຸຍາດໃຫ້
ການຄັດເລືອກທັ້ງໝົດຜ່ານບໍລິສັດຄັດເລືອກ	ບໍ່ມີຄ່າໃຊ້ຈ່າຍອື່ນນອກຈາກຄ່າໃຊ້ຈ່າຍທີ່ເກັບໂດຍບໍລິສັດຄັດເລືອກ
ການຄັດເລືອກບາງຢ່າງ ແຕ່ບໍ່ແມ່ນທັ້ງໝົດ ຜ່ານບໍລິສັດຄັດເລືອກ	ບໍ່ມີຄ່າໃຊ້ຈ່າຍອື່ນນອກຈາກຄ່າໃຊ້ຈ່າຍທີ່ເກັບໂດຍບໍລິສັດຄັດເລືອກ, ບວກ 25%
ການຄັດເລືອກທັ້ງໝົດທີ່ດຳເນີນການໂດຍເຈົ້າຂອງເຮືອນເຊົ່າ; ບໍ່ໄດ້ໃຊ້ບໍລິສັດຄັດເລືອກໃດໜຶ່ງ	ບໍ່ມີຄ່າໃຊ້ຈ່າຍອື່ນນອກຈາກຄ່າໃຊ້ຈ່າຍສຳລັບບໍລິສັດຄັດເລືອກທີ່ເປັນມືອາຊີບ ທີ່ໃຫ້ບໍລິການໃນເຂດເມືອງພອທແລນດ໌, ບວກ 10%

**ນີ້ແມ່ນສ່ວນເສີມຕໍ່ຂໍ້ກຳນົດຂອງ ORS ບົດທີ 90.295.*

ໃນກໍລະນີໃດແດ່ທີ່ເຈົ້າຂອງເຮືອນເຊົ່າສາມາດປະຕິເສດທີ່ຈະດຳເນີນການກັບໃບສະໝັກ?

ເຈົ້າຂອງເຮືອນເຊົ່າສາມາດປະຕິເສດທີ່ຈະດຳເນີນການພິຈາລະນາໃບສະໝັກ ຖ້າວ່າ:

a. ຜູ້ສະໝັກມີປະຫວັດການລະເມີດສັນຍາເຊົ່າ, ຊຶ່ງສາມາດພິສູດໄດ້ —ກັບເຈົ້າຂອງເຮືອນເຊົ່າລາຍດຽວກັນ—ພ້ອມກັບມີປະຫວັດການລະເມີດພາຍໃນ 365 ວັນນັບແຕ່ວັນຍື່ນສະໝັກ, ແລະຖ້າວ່າ ເຈົ້າຂອງເຮືອນເຊົ່າໄດ້ໃຫ້ສຳເນົາຂອງໜັງສືແຈ້ງການລະເມີດທີ່ມີເຫດຜົນແກ່ຜູ້ສະໝັກແລ້ວ;*

b. ໃບສະໝັກບໍ່ສົມບູນຄົບຖ້ວນ;

c. ໃບສະໝັກບໍ່ມີຂໍ້ມູນກ່ຽວກັບການຢືນຢັນຕົວຕົນ ຫຼື ລາຍໄດ້; ຫຼື

d. ຜູ້ສະໝັກມີເຈດຕະນາປິດບັງຂໍ້ມູນທີ່ຕ້ອງການ ຫຼື ເຮັດໃຫ້ເຂົ້າໃຈຜິດ.

**ເບິ່ງ ກົດລະບຽບການບໍລິຫານ ເພື່ອຮູ້ລາຍລະອຽດຕື່ມ* portland.gov/rso/application-screening.

ຄຳແນະນຳເລັກນ້ອຍສຳລັບຜູ້ສະໝັກ

ກວດກາເບິ່ງໃຫ້ໝັ້ນໃຈວ່າ ໃບສະໝັກຂອງທ່ານສົມບູນຄົບຖ້ວນ! ເຈົ້າຂອງເຮືອນເຊົ່າສາມາດປະຕິເສດທີ່ຈະພິຈາລະນາໃບສະໝັກຂອງທ່ານໄດ້ ຖ້າວ່າ ມັນບໍ່ສົມບູນຄົບຖ້ວນ.

ການຄັດເລືອກທົ່ວໄປ

A. ເອກະສານປະຈຳຕົວ


ເຈົ້າຂອງເຮືອນເຊົ່າບໍ່ສາມາດປະຕິເສດໃບສະໝັກດ້ວຍເຫດຜົນວ່າໃບສະໝັກບໍ່ສົມບູນຄົບຖ້ວນ ເນື່ອງຈາກ ຜູ້ສະໝັກ (ຫຼື ສະມາຊິກໃນຄົວເຮືອນຂອງຜູ້ສະໝັກ) ບໍ່ມີເລກປະກັນສັງຄົມ ຫຼື ບໍ່ສາມາດພິສູດການຢູ່ໃນສະຫະລັດຢ່າງຖືກຕ້ອງຕາມກົດໝາຍໄດ້.

ນອກຈາກນີ້, ເຈົ້າຂອງເຮືອນເຊົ່າບໍ່ສາມາດຊັກຖາມກ່ຽວກັບສະຖານະການເຂົ້າເມືອງຂອງຜູ້ສະໝັກໄດ້, ຫຼື ສະມາຊິກໃດໆ ໃນຄົວເຮືອນຂອງຜູ້ສະໝັກ, ຫຼື ຮຽກຮ້ອງເອົາຫຼັກຖານຢັ້ງຢືນການຢູ່ໃນສະຫະລັດຢ່າງຖືກກົດໝາຍໄດ້.

ຮູບແບບຂອງເອກະສານປະຈຳຕົວແນວໃດແດ່ທີ່ເຈົ້າຂອງເຮືອນເຊົ່າຍອມຮັບໄດ້?

ໃນການກວດສອບຊື່, ວັນເດືອນປີເກີດ, ແລະຮູບຂອງຜູ້ສະໝັກ, ເຈົ້າຂອງເຮືອນເຊົ່າຕ້ອງຍອມຮັບເອົາເອກະສານໃດໜຶ່ງຕໍ່ໄປນີ້ (ຫຼື ເອກະສານຮ່ວມກັນດັ່ງນີ້):

- ຫຼັກຖານກ່ຽວກັບເລກປະກັນສັງຄົມ (ບັດ SSN)
- ບັດຢັ້ງຢືນການຂຶ້ນທະບຽນຂອງຊາວຕ່າງຊາດໃນການເປັນຜູ້ຢູ່ອາໄສຖາວອນທີ່ໃຊ້ການໄດ້;
- ວີຊ່າຄົນເຂົ້າເມືອງ;
- ເລກປະຈຳຕົວຜູ້ເສັຽພາສີລາຍບຸກຄົນ (ITIN);
- ວີຊ່າທີ່ບໍ່ແມ່ນສຳລັບຄົນເຂົ້າເມືອງ;
- ບັດປະຈຳຕົວໃດໆ ທີ່ຣັຖບານອອກໃຫ້ໂດຍບໍ່ຄຳນຶງເຖິງ ວັນໝົດອາຍຸ; ຫຼື
- ບັດປະຈຳຕົວໃດໆ ທີ່ບໍ່ແມ່ນຣັຖບານກອອກໃຫ້ ຫຼື ເອກະສານຢືນຢັນຕົວຕົນຫຼາຍອັນລວມກັນ ຊຶ່ງຈະເຮັດໃຫ້ສາມາດກວດສອບຕົວຕົນບຸກຄົນໄດ້ຢ່າງສົມເຫດຜົນ



B. ລາຍໄດ້

ໃນກໍລະນີທີ່ຈະຢູ່ອາໄສກັນຫຼາຍຄົນ, ຜູ້ສະໝັກອາດເລືອກໄວ້ວ່າ ຜູ້ໃຫຍ່ຄົນໃດທີ່ຈະເປັນຜູ້ຮັບຜິດຊອບດ້ານການເງິນ, ແລະຜູ້ໃດແດ່ຈະເປັນຜູ້ເຊົ່າທີ່ບໍ່ມີໜ້າທີ່ຮັບຜິດຊອບດ້ານການເງິນ.

ຜູ້ສະໝັກ ຕໍ່ກັບ ຜູ້ເຊົ່າທີ່ບໍ່ແມ່ນຜູ້ສະໝັກ

ຜູ້ສະໝັກ ຈະຖືວ່າເປັນຜູ້ຮັບຜິດຊອບດ້ານການເງິນ, ແລະອາດຖືກກວດສອບສຳລັບຄວາມຮັບຜິດຊອບດ້ານການເງິນ. **ຜູ້ເຊົ່າທີ່ບໍ່ແມ່ນຜູ້ສະໝັກ** ຈະຖືວ່າ ບໍ່ມີໜ້າທີ່ຮັບຜິດຊອບດ້ານການເງິນ, ແລະບໍ່ຕ້ອງຖືກກວດສອບສຳລັບຄວາມຮັບຜິດຊອບດ້ານການເງິນ. ຜູ້ເຊົ່າທີ່ບໍ່ແມ່ນຜູ້ສະໝັກອາດຖືກກວດສອບປັດໃຈດ້ານການບຳລຸງຮັກສາ ແລະຄວາມປະພຶດ.

ການປະເມີນຜົນຜູ້ເຊົ່າທີ່ບໍ່ແມ່ນຜູ້ສະໝັກ

ເຈົ້າຂອງເຮືອນເຊົ່າອາດຄັດເລືອກຜູ້ເຊົ່າທີ່ເປັນຜູ້ໃຫຍ່ແລະບໍ່ແມ່ນຜູ້ສະໝັກດ້ວຍປັດໃຈທັງໝົດທີ່ກ່ຽວພັນກັບການບຳລຸງຮັກສາເຮືອນເຊົ່າ, ແລະການປະພຶດຕົວທີ່ສອດຄ່ອງກັບສຸຂະພາບ, ຄວາມປອດໄພ ຫຼື ຄວາມສະຫງົບສຸກຂອງສະຖານທີ່, ແລະເພື່ອປະເມີນຄວາມສາມາດທີ່ຄາດຫວັງໄວ້ຂອງຜູ້ເຊົ່າທີ່ຈະປະຕິບັດຕາມ **ກົດລະບຽບຂອງການຢູ່ອາໄສ**ຂອງເຈົ້າຂອງເຮືອນເຊົ່າ. ເຖິງວ່າ ເຈົ້າຂອງເຮືອນເຊົ່າບໍ່ສາມາດກວດສອບຜູ້ເຊົ່າທີ່ບໍ່ແມ່ນຜູ້ສະໝັກໃນດ້ານຄວາມຮັບຜິດຊອບດ້ານການເງິນ, ແຕ່ເຂົາເຈົ້າສາມາດຮຽກຮ້ອງໃຫ້ຜູ້ເຊົ່າທີ່ເປັນຜູ້ໃຫຍ່ທຸກຄົນເຊັນຊື່ໃນໜັງສືກົດລະບຽບການຢູ່ອາໄສໄດ້.

ຂີດຈຳກັດກ່ຽວກັບອັດຕາສ່ວນລະຫວ່າງລາຍໄດ້ແລະຄ່າເຊົ່າ

ເມື່ອຈຳນວນຄ່າເຊົ່າຕໍ່ເດືອນ **ໜ້ອຍກວ່າ ຈຳນວນທີ່ຄົວເຮືອນຫາມາໄດ້ທີ່ 80% ຂອງເງິນລາຍໄດ້ສະເຫຼ່ຍ ຂອງຄອບຄົວ (median family income, MFI),*** ເຈົ້າຂອງເຮືອນເຊົ່າອາດຮຽກຮ້ອງວ່າ ລາຍໄດ້ລວມຕໍ່ເດືອນຕ້ອງສູງເຖິງ—ແຕ່ບໍ່ເກີນ—2.5 ເທົ່າຂອງຈຳນວນຄ່າເຊົ່າ.

ເມື່ອຈຳນວນຄ່າເຊົ່າຕໍ່ເດືອນ **ຫຼາຍກວ່າ ຈຳນວນທີ່ຄົວເຮືອນຫາມາໄດ້ທີ່ 80% ຂອງເງິນລາຍໄດ້ສະເຫຼ່ຍ ຂອງຄອບຄົວ (median family income, MFI),*** ເຈົ້າຂອງເຮືອນເຊົ່າອາດຮຽກຮ້ອງວ່າ ລາຍໄດ້ລວມຕໍ່ເດືອນຕ້ອງສູງເຖິງ —ແຕ່ບໍ່ເກີນ—2 ເທົ່າຂອງຈຳນວນຄ່າເຊົ່າ.

ຖ້າວ່າ ຄ່າເຊົ່າຕ່ຳກວ່າຈຳນວນທີ່ຫາມາໄດ້ທີ່ 80% MFI, ສະນັ້ນ ລາຍໄດ້ທີ່ກຳນົດໄວ້ອາດແມ່ນ:

2.5 ເທົ່າ **ຈຳນວນຄ່າເຊົ່າ**

ຖ້າວ່າ ຄ່າເຊົ່າຫຼາຍກວ່າຈຳນວນທີ່ຫາໄດ້ທີ່ 80% MFI, ສະນັ້ນ ລາຍໄດ້ທີ່ກຳນົດໄວ້ອາດແມ່ນ:

2 ເທົ່າ **ຈຳນວນຄ່າເຊົ່າ**

**ຄ່າເຊົ່າທີ່ສາມາດຈ່າຍໃຫ້ໄດ້ທີ່ 80% MFI ແມ່ນຕີພິມໄວ້ປະຈຳປີໂດຍ PHB:* portland.gov/phb/*; ເບິ່ງ ກົດລະບຽບການບໍລິຫານເພື່ອຮູ້ລາຍລະອຽດເຕີ່ມ* portland.gov/rso/application-screening.

ມີການປະເມີນອັດຕາສ່ວນລະຫວ່າງລາຍໄດ້ກັບຄ່າເຊົ່າແນວໃດແດ່?

ເມື່ອປະເມີນອັດຕາສ່ວນລາຍໄດ້ແລະຄ່າເຊົ່າຂອງຜູ້ສະໝັກ, ເຈົ້າຂອງເຮືອນເຊົ່າຈະຕ້ອງ:

- **ລວມເອົາແຫຼ່ງລາຍໄດ້ທັ້ງໝົດຂອງຜູ້ສະໝັກ**, ລວມເຖິງ—ແຕ່ບໍ່ຈຳກັດຢູ່ແຕ່—ຄ່າຈ້າງ, ເງິນຊ່ວຍເຫຼືອຄ່າເຊົ່າ (ສະເພາະທີ່ບໍ່ແມ່ນຈາກຣັຖບານເທົ່ານັ້ນ), ແລະຜົນປະໂຫຍດຈາກເງິນຊ່ວຍເຫຼືອສາທາລະນະ. ນອກຈາກນີ້ ເຈົ້າຂອງເຮືອນເຊົ່າຍັງອາດເລືອກພິຈາລະນາເອົາການຊ່ວຍເຫຼືອທີ່ສາມາດກວດສອບໄດ້ຈາກໝູ່ເພື່ອນ ຫຼື ຄອບຄົວໄດ້.
- ການຄິດໄລ່ພື້ນຖານ:
  - a) ຈຳນວນຄ່າເຊົ່າທີ່ຖືກຫຼຸດລົງໂດຍຈຳນວນເງິນຮັບປະກັນຈາກຣັຖ, ຣັຖບານກາງ, ຫຼື ທ້ອງຖິ່ນ ຫຼື ເງິນຊ່ວຍເຫຼືອຄ່າທີ່ພັກອາໄສທີ່ມີໃຫ້ແກ່ຜູ້ສະໝັກ; ແລະ
  - b) ແຫຼ່ງການເງິນສະສົມຂອງຜູ້ສະໝັກທຸກຄົນ (ບໍ່ລວມຜູ້ເຊົ່າທີ່ບໍ່ແມ່ນຜູ້ສະໝັກ)

ຈະເຮັດແນວໃດ ຖ້າວ່າ ຜູ້ສະໝັກບໍ່ມີເງື່ອນໄຂກົງຕາມອັດຕາສ່ວນດ້ານລາຍໄດ້ຂັ້ນຕ່ຳ?

ຖ້າວ່າ ຜູ້ສະໝັກບໍ່ມີເງື່ອນໄຂກົງຕາມອັດຕາສ່ວນລາຍໄດ້ຂັ້ນຕ່ຳ, ເຈົ້າຂອງເຮືອນເຊົ່າອາດຮຽກຮ້ອງເອົາຫຼັກປະກັນທີ່ເປັນເອກະສານເພີ່ມເຕີມຈາກຜູ້ຮັບປະກັນ, ຫຼື ໃນຮູບແບບຂອງ **ເງິນປະກັນເພີ່ມເຕີມ** [ສອດຄ່ອງຕາມພາກສ່ວນຍ່ອຍຂໍ້ 30.01.087 A]. ເຈົ້າຂອງເຮືອນເຊົ່າຄວນແຈ້ງບອກການອະນຸມັດແບບມີເງື່ອນໄຂນີ້ເປັນລາຍລັກອັກສອນ, ແລະລະບຸຈຳນວນເງິນປະກັນເພີ່ມ. ຜູ້ສະໝັກຈະມີເວລາບໍ່ໜ້ອຍກວ່າ 48 ຊົ່ວໂມງທີ່ຈະຍອມຮັບ ຫຼື ປະຕິເສດໂອກາດນີ້. ຖ້າວ່າ ເຈົ້າຂອງເຮືອນເຊົ່າຮຽກຮ້ອງເອົາເງິນປະກັນເພີ່ມເຕີມຈາກຜູ້ຮັບປະກັນ, ເຈົ້າຂອງເຮືອນເຊົ່າອາດຮຽກຮ້ອງໃຫ້ຜູ້ຮັບປະກັນສະແດງຄວາມໝັ້ນຄົງທາງການເງິນ.

ຖ້າວ່າ ຜູ້ຮັບປະກັນແມ່ນເພື່ອນ ຫຼື ສະມາຊິກໃນຄອບຄົວ, ເຈົ້າຂອງເຮືອນເຊົ່າບໍ່ສາມາດຮຽກຮ້ອງໃຫ້ຜູ້ຮັບປະກັນມີລາຍໄດ້ຫຼາຍກວ່າຈຳນວນຄ່າເຊົ່າສາມເທົ່າ. ຂໍ້ຕົກລົງກັບຜູ້ຮັບປະກັນຕ້ອງບໍ່ມີເງື່ອນໄຂກາຍຈາກສັນຍາເຊົ່າ.

ການຄັດເລືອກເພີ່ມເຕີມ

ໂດຍຮ່ວມກັນກັບ **ການຄັດເລືອກທົ່ວໄປ**, ເຈົ້າຂອງເຮືອນເຊົ່າອາດນຳໃຊ້ເກນການຄັດເລືອກເພີ່ມເຕີມທີ່ນອກເໜືອຈາກເລື່ອງລາຍໄດ້ ແລະການພິສູດຫຼັກຖານສະແດງຕົນ.

ເຈົ້າຂອງເຮືອນເຊົ່າສາມາດນຳໃຊ້ເກນທີ່ໄດ້ກຳນົດໄວ້ລ່ວງໜ້າ ຊຶ່ງກໍແມ່ນ ເກນການຄັດເລືອກທີ່ມີ **ການກີດກັ້ນໜ້ອຍ** ຫຼື ເລືອກເກນຄັດເລືອກດ້ວຍຕົນເອງ (**ຕົວເລືອກຂອງເຈົ້າຂອງເຮືອນເຊົ່າ**). ເຈົ້າຂອງເຮືອນເຊົ່າໄດ້ຮັບການຊຸກຍູ້ໃຫ້ນຳໃຊ້ເກນການຄັດເລືອກທີ່ສອດຄ່ອງກັບ, ຫຼື ມີຂໍ້ຫ້າມໜ້ອຍກວ່າ, ຕໍ່ກັບເກນການຄັດເລືອກທີ່ມີການກີດກັ້ນໜ້ອຍ.

ຖ້າວ່າມີການເກັບຄ່າທຳນຽມການຄັດເລືອກ, ເກນການຄັດເລືອກທັ້ງໝົດຕ້ອງໄດ້ໃຫ້ຄວາມໝາຍ ແລະລາຍລະອຽດໃນປະກາດແຈ້ງການມີທີ່ພັກອາໄສໃຫ້ເຊົ່າ.

ຄຳແນະນຳເລັກນ້ອຍສຳລັບຜູ້ສະໝັກ

ກັງວົນໃຈກ່ຽວກັບຕົວການຄັດເລືອກທີ່ເປັນລົບແມ່ນບໍ່?
ທ່ານສາມາດໃຫ້ ຫຼັກຖານເສີມ ເພື່ອອະທິບາຍ, ໃຫ້ເຫດຜົນ ຫຼື ລົບລ້າງຂໍ້ມູນທີ່ເປັນລົບ ທີ່ຖືກເປີດເຜີຍຜ່ານການຄັດເລືອກ.




ການເຮັດແນວນີ້ອາດຢູ່ໃນຮູບແບບຂອງ:

- ຈົດໝາຍສ່ວນຕົວ,
- ເອກະສານຕ່າງໆ ຈາກອົງການໃນຊຸມຊົນ,
- ຫຼັກຖານຂອງການເຂົ້າຮ່ວມໃນໂຄງການປິ່ນປົວການຕິດສານເສບຕິດ, ຫຼື
- ສິ່ງໃດກໍຕາມ ທີ່ທ່ານເຊື່ອວ່າ ກ່ຽວພັນກັນ.

ໃຫ້ລວມເອກະສານນີ້ເຂົ້າກັບໃບສະໝັກທີ່ປະກອບແລ້ວຂອງທ່ານ.

ການກີດກັ້ນໜ້ອຍ ຕໍ່ກັບ ທາງເລືອກຂອງເຈົ້າຂອງເຮືອນເຊົ່າ

ຖ້ານຳໃຊ້ເກນການຄັດເລືອກເພີ່ມເຕີມ, ເຈົ້າຂອງເຮືອນເຊົ່າມີສອງທາງເລືອກ:



A. ເກນການຄັດເລືອກແບບມີການກີດກັ້ນໜ້ອຍ

ເມື່ອນຳໃຊ້ເກນການຄັດເລືອກແບບມີການກີດກັ້ນໜ້ອຍ, ເຈົ້າຂອງເຮືອນເຊົ່າເຫັນດີນຳທີ່ຈະບໍ່ປະຕິເສດຜູ້ສະໝັກດ້ວຍມູນເຫດຂອງການມີປະຫວັດດ້ານອາຊະຍາກຳ, ເຄຣດິດ, ຫຼື ການເຊົ່າ:

ປະຫວັດທາງອາຊະຍາກຳ

1. ການຖືກຈັບກຸມຊຶ່ງບໍ່ໄດ້ສົ່ງຜົນໃຫ້ຖືກຕັດສິນຮັບໂທດ, ເວັ້ນແຕ່ວ່າ ຄະດີນັ້ນຍັງຄ້າງລໍການຕັດສິນຢູ່ ໃນວັນທີທີ່ມີການສະໝັກ.
2. ການເຂົ້າຮ່ວມໃນ, ຫຼື ຈົບອອກຈາກ, ການປ່ຽນແປງ ຫຼື ການຍືດເວລາຂອງໂຄງການດ້ານການພິຈາລະນາຄະດີ
3. ການຕັດສິນລົງໂທດຊຶ່ງໄດ້ຖືກຍົກເລີກ, ລົບລ້າງ, ເປັນໂມຄະ ຫຼື ບໍ່ມີຜົນບັງຄັບໃຊ້ໂດຍການຕັດສິນຂອງສານ
4. ການຕັດສິນລົງໂທດສຳລັບອາຊະຍາກຳ ທີ່ບໍ່ຖືວ່າຜິດກົດໝາຍອີກຕໍ່ໄປໃນຣັຖອໍຣິກອນ
5. ການຕັດສິນລົງໂທດ ຫຼື ການຕັດສິນອື່ນໃດ ທີ່ອອກຜ່ານລະບົບສານເຍົາວະຊົນ
6. ການຕັດສິນລົງໂທດສຳລັບໂທດຖານເບົາ ຊຶ່ງວັນທີຂອງການພິພາກສາລົງໂທດນັ້ນດົນກວ່າ 3 ປີ ນັບຈາກວັນທີຂອງການສະໝັກ*
7. ການຕັດສິນລົງໂທດສຳລັບການກະທຳຜິດຮ້າຍແຮງ ຊຶ່ງວັນທີຂອງການພິພາກສາລົງໂທດນັ້ນດົນກວ່າ 7 ປີ ນັບຈາກວັນທີຂອງການສະໝັກ*

ຖ້າວ່າຜູ້ສະໝັກຖືກປະຕິເສດ ດ້ວຍເຫດຜົນທີ່ກ່ຽວຂ້ອງການປະຫວັດອາຊະຍາກຳ, ເຈົ້າຂອງເຮືອນເຊົ່າຈະຕ້ອງພິຈາລະນາຫຼັກຖານເພີ່ມເຕີມອື່ນ ທີ່ຜູ້ສະໝັກຈັດຫາໃຫ້ພ້ອມກັບໃບສະໝັກທີ່ປະກອບຄົບຖ້ວນແລ້ວຂອງເຂົາເຈົ້າ.

ປະຫວັດດ້ານເຄຣດິດ

1. ຄະແນນເຄຣດິດຢ່າງໜ້ອຍ 500 ຂຶ້ນໄປ
2. ປະຫວັດດ້ານເຄຣດິດບໍ່ພຽງພໍ, ເວັ້ນແຕ່ວ່າ ຜູ້ສະໝັກບໍ່ຈິງໃຈໃນການໃຫ້ຂໍ້ມູນປະຫວັດດ້ານເຄຣດິດ ຊຶ່ງອາດເຮັດໃຫ້ເປັນພື້ນຖານຂອງການປະຕິເສດ
3. ຂໍ້ມູນໃນທາງລົບທີ່ໄດ້ມາຈາກ ອົງການລາຍງານເຄຣດິດຂອງຜູ້ບໍລິໂພກ ຊຶ່ງລະບຸຂໍ້ບັງຄັບກ່ຽວກັບການຄ້າງຊຳລະໃນຈຳນວນໜ້ອຍກວ່າ $1,000
4. ຍອດໜີ້ຄ້າງສຳລັບຄວາມເສັຽຫາຍທີ່ເກີດກັບເຮືອນເຊົ່າກ່ອນໜ້ານີ້ ມີຈຳນວນໜ້ອຍກວ່າ $500
5. ການລົ້ມລະລາຍທີ່ຍື່ນໂດຍຜູ້ສະໝັກ ໄດ້ຖືກຖອນອອກ
6. ບົດທີ 13 ວ່າດ້ວຍການລົ້ມລະລາຍ ຊຶ່ງຍື່ນໂດຍຜູ້ສະໝັກ, ແລະພາຍໃຕ້ການຈ່າຍຄືນຢ່າງສະໝ່ຳສະເໝີ
7. ໜີ້ສິນໃນດ້ານການປິ່ນປົວ ຫຼື ການສຶກສາ/ການຝຶກອາຊີບ

★ **ແນວທາງປະຕິບັດທີ່ດີທີ່ສຸດ** ເຖິງວ່າຈະບໍ່ຈຳເປັນ, ແຕ່ກຳເປັນແນວທາງປະຕິບັດທີ່ດີທີ່ສຸດທີ່ຈະພິຈາລະນາຂໍເອົາຫຼັກຖານເພີ່ມເຕີມສຳລັບປະຫວັດການເຊົ່າ ແລະປະຫວັດດ້ານເຄຣດິດ.

ປະຫວັດການເຊົ່າ

1. ການກະທຳທີ່ເປັນໄປເພື່ອໃຫ້ໄດ້ການຄອບຄອງກັບຄືນມາ, ຖ້າວ່າການກະທຳ:
   a) ຖືກຍົກເລີກ ຫຼື ໄດ້ຮັບຜົນບວກໃນການຕັດສິນທົ່ວໄປສຳລັບຜູ້ສະໝັກ ກ່ອນໄດ້ຍື່ນໃບສະໝັກ;
   b) ໄດ້ສົ່ງຜົນລົບໃນການຕັດສິນທົ່ວໄປຕໍ່ຜູ້ສະໝັກ, ຊຶ່ງມີລະຍະເວລາ 3 ປີຂຶ້ນໄປ ກ່ອນວັນທີຂອງການສະໝັກ; ຫຼື
   c) ໄດ້ສົ່ງຜົນລົບໃນການຕັດສິນທົ່ວໄປຕໍ່ຜູ້ສະໝັກ, ຊຶ່ງມີລະຍະເວລາຕ່ຳກວ່າ 3 ປີ ກ່ອນວັນທີຂອງການສະໝັກ ຖ້າວ່າ 1) ການຍຸດຕິການເຊົ່າ (ຂຶ້ນກັບການກະທຳທີ່ເປັນມູນຖານ) ເກີດຂຶ້ນໂດຍບໍ່ມີສາເຫດ, ຫຼື 2) ຖ້າວ່າການຕັດສິນເປັນລົບຕໍ່ຜູ້ສະໝັກເປັນການຕັດສິນໂດຍອັດຕະໂນມັດເນື່ອງຈາກການບໍ່ມາປາກົດຕົວໃນສານ, ແລະຜູ້ສະໝັກສາມາດສະແດງຫຼັກຖານທີ່ສາມາດໃຊ້ເປັນເຄຣດິດໄດ້ ຊຶ່ງລະບຸວ່າ ເຂົາເຈົ້າໄດ້ອອກຈາກທີ່ພັກອາໄສແລ້ວ ໃນເວລາທີ່ມີການສົ່ງໜັງສືແຈ້ງ
   d) ຄຳຕັດສິນ ຫຼື ບັນທຶກຂອງສານທີ່ຖືກຄັດແຍກໄວ້ກ່ອນ ຫຼື ຖືກປິດໃນເວລາຕໍ່ມາ ໂດຍສອດຄ່ອງກັບລະບຽບການໃນກົດໝາຍຂອງຣັຖ
2. ຂໍ້ມູນໃດກໍຕາມທີ່ເຈົ້າຂອງເຮືອນເຊົ່າໄດ້ມາຈາກການກວດສອບດ້ວຍວາຈາ ຫຼື ເປັນເອກະສານກ່ຽວກັບການເຊົ່າ, ພ້ອມກັບການຍົກເວັ້ນກ່ຽວກັບ:
   a) ການຜິດສັນຍາເຊົ່າ;
   b) ມີການລະເມີດສັນຍາເຊົ່າສາມຄັ້ງຂຶ້ນໄປພາຍໃນໜຶ່ງປີ ກ່ອນວັນທີຂອງການສະໝັກ, ແລະໄດ້ມີການອອກໜັງສືແຈ້ງການເຖິງການລະເມີດນັ້ນແກ່ຜູ້ເຊົ່າ;
   c) ມີຍອດຄ້າງຊຳລະແກ່ເຈົ້າຂອງເຮືອນເຊົ່າ; ຫຼື
   d) ການລະເມີດສັນຍາເຊົ່າຊຶ່ງໄດ້ສົ່ງຜົນໃຫ້ເກີດການຍຸດຕິການເຊົ່າແບບມີສາເຫດ
4. ປະຫວັດການເຊົ່າບໍ່ພຽງພໍ, ເວັ້ນແຕ່ວ່າ ຜູ້ສະໝັກບໍ່ຈິງໃຈໃນການໃຫ້ຂໍ້ມູນປະຫວັດການເຊົ່າ

ໃນການນຳໃຊ້ເກນການຄັດເລືອກແບບມີການກີດກັ້ນໜ້ອຍ, ເຈົ້າຂອງເຮືອນເຊົ່າຈຳເປັນຕ້ອງປະຕິບັດຕາມກົດໝາຍຂອງຣັຖບານກາງ, ຣັຖ ແລະທ້ອງຖິ່ນທີ່ບັງຄັບໃຊ້.

B. ເກນການຄັດເລືອກແບບເຈົ້າຂອງເຮືອນເຊົ່າເລືອກເອງ

ການຍອມຮັບໃນສະໝັກ

ເມື່ອເຈົ້າຂອງເຮືອນເຊົ່ານຳໃຊ້ເກນການຄັດເລືອກແບບເຈົ້າຂອງເລືອກເອງ (**ເຈົ້າຂອງເຮືອນເຊົ່າເລືອກເອງ**) ແລະຍອມຮັບການສະໝັກ, ການປະເມີນເພີ່ມເຕີມກໍຈະບໍ່ຈຳເປັນ.

ເຈດຕະນາໃນການປະຕິເສດໃນສະໝັກ

ເມື່ອເຈົ້າຂອງເຮືອນເຊົ່ານຳໃຊ້ເກນການຄັດເລືອກແບບເຈົ້າຂອງເລືອກເອງ ແລະຕັ້ງໃຈທີ່ຈະປະຕິເສດໃບສະໝັກ, ຖ້າວ່າມີເກນຂໍ້ໃດຂໍ້ໜຶ່ງເປັນຂໍ້ຫ້າມຫຼາຍກວ່າເກນໃດໜຶ່ງຂອງເກນການຄັດເລືອກແບບມີການກີດກັ້ນໜ້ອຍ, ທາງເຈົ້າຂອງເຮືອນເຊົ່າຈະຕ້ອງດຳເນີນການ **ປະເມີນຜົນສ່ວນບຸກຄົນ** ກ່ອນທີ່ຈະອອກໃບປະຕິເສດແກ່ຜູ້ສະໝັກ.

▶ ການດຳເນີນການປະເມີນຜົນສ່ວນບຸກຄົນ

ການປະເມີນຜົນສ່ວນບຸກຄົນກຳນົດວ່າ ເຈົ້າຂອງເຮືອນເຊົ່າຕ້ອງພິຈາລະນາສະພາບການທີ່ເປັນອົງປະກອບຕໍ່ການສະໝັກທີ່ເປັນລົບ. ນອກຈາກນີ້, ຍັງເປັນການໃຫ້ໂອກາດແກ່ຜູ້ສະໝັກໃນການອະທິບາຍວ່າເປັນຫຍັງສະພາບການນັ້ນຈຶ່ງຄວນໄດ້ຮັບການຍອມຮັບ ທັງໆ ທີ່ເປັນອົງປະກອບທີ່ເຮັດໃຫ້ຂາດຄຸນສົມບັດເໝາະສົມສຳລັບການສະໝັກຂອງຕົນ. ບໍ່ມີຮູບແບບ ຫຼື ຟອມມາດຕະຖານ ສຳລັບການປະເມີນຜົນສ່ວນບຸກຄົນ. ຖ້າວ່າ ເຈົ້າຂອງເຮືອນເຊົ່າມີຄຳຖາມ, ເຂົາເຈົ້າຄວນຊອກຫາຄຳແນະນຳທາງກົດໝາຍ.


▶ ການພິຈາລະນາຫຼັກຖານເພີ່ມເຕີມ

ເມື່ອດຳເນີນການປະເມີນຜົນສ່ວນບຸກຄົນ, ເຈົ້າຂອງເຮືອນເຊົ່າຈຳເປັນຕ້ອງຍອມຮັບ ແລະພິຈາລະນາ **ຫຼັກຖານເພີ່ມເຕີມ** ທັງໝົດ ທີ່ຜູ້ສະໝັກຈັດຫາໃຫ້ (ພ້ອມກັບໃບສະໝັກທີ່ປະກອບຄົບຖ້ວນແລ້ວ) ເພື່ອອະທິບາຍ, ໃຫ້ເຫດຜົນ, ຫຼື ລົບລ້າງຄວາມກ່ຽວຂ້ອງຂອງຂໍ້ມູນທີ່ເປັນລົບທີ່ຖືກເປີດເຜີຍຜ່ານການຄັດເລືອກ.

ເມື່ອດຳເນີນການປະເມີນຜົນສ່ວນບຸກຄົນ, ເຈົ້າຂອງເຮືອນເຊົ່າຕ້ອງພິຈາລະນາຫຼັກຖານເພີ່ມເຕີມ ແລະ:



1. ລັກສະນະ ແລະ ຄວາມຮ້າຍແຮງ ຂອງເຫດການ ຕ່າງໆ ທີ່ຈະນຳໄປ ສູ່ການປະຕິເສດ;



2. ຈຳນວນ ແລະປະ ເພດຂອງເຫດ ການ;



3. ເວລາທີ່ຜ່ານພົ້ນ ໄປນັບຕັ້ງແຕ່ວັນທີ ທີ່ເກີດເຫດການ; ແລະ



4. ອາຍຸຂອງບຸກຄົນ ໃນເວລາທີ່ເກີດ ເຫດການ.

ການປະຕິເສດ, ການອຸທອນ ແລະການຍອມຮັບ

A. ການປະຕິເສດ

ການປະຕິເສດໂດຍທົ່ວໄປ

ເຈົ້າຂອງເຮືອນເຊົ່າສາມາດປະຕິເສດຜູ້ສະໝັກໃດໆ ຫຼື ຜູ້ເຊົ່າທີ່ບໍ່ແມ່ນຜູ້ສະໝັກກໍໄດ້ ໂດຍສອດຄ່ອງກັບຂໍ້ກຳນົດ 30.01.086 ແລະກົດໝາຍທັງໝົດທີ່ກ່ຽວຂ້ອງຂອງຣັຖບານກາງ, ຣັຖ ແລະທ້ອງຖິ່ນ.

ການປະຕິເສດດ້ວຍເກນການຄັດເລືອກແບບມີການກີດກັ້ນໜ້ອຍ

ເມື່ອປະຕິເສດຜູ້ສະໝັກໂດຍໃຊ້ເກນການຄັດເລືອກແບບມີການກີດກັ້ນໜ້ອຍ, ເຈົ້າຂອງເຮືອນເຊົ່າຈະຕ້ອງໃຫ້ໜັງສື **ແຈ້ງການປະຕິເສດ**, ພ້ອມກັບຂໍ້ຄວາມບອກເຫດຜົນສຳລັບການປະຕິເສດ. ກ່ອນປະຕິເສດຜູ້ສະໝັກດ້ວຍເຫດຜົນການມີປະຫວັດອາຊະຍາກຳ, ເຈົ້າຂອງເຮືອນເຊົ່າຕ້ອງພິຈາລະນາຫຼັກຖານເພີ່ມເຕີມທີ່ໄດ້ມາຈາກຜູ້ສະໝັກ, ຖ້າວ່າ ຍື່ນພ້ອມກັບໃບສະໝັກ.

ການປະຕິເສດດ້ວຍເກນການຄັດເລືອກແບບເຈົ້າຂອງເຮືອນເຊົ່າເລືອກເອງ

ເມື່ອປະຕິເສດຜູ້ສະໝັກໂດຍໃຊ້ເກນການຄັດເລືອກແບບເຈົ້າຂອງເຮືອນເຊົ່າເລືອກເອງ, ເຈົ້າຂອງເຮືອນເຊົ່າຕ້ອງດຳເນີນການ **ການປະເມີນຜົນສ່ວນບຸກຄົນ** ສຳລັບຜູ້ສະໝັກ (ເບິ່ງ ໜ້າ 16). ຫຼັງຈາກດຳເນີນການປະເມີນຜົນແລ້ວ, ຊຶ່ງລວມເຖິງ ການພິຈາລະນາຫຼັກຖານເພີ່ມເຕີມ, ເຈົ້າຂອງເຮືອນເຊົ່າສາມາດປະຕິເສດຜູ້ສະໝັກໄດ້, ຕາບໃດທີ່:

- ການປະຕິເສດນັ້ນບໍ່ແມ່ນການຈຳແນກຕ້ານຕໍ່ບຸກຄົນ ຊຶ່ງສອດຄ່ອງກັບ ກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມ;
- ການປະຕິເສດນັ້ນສອດຄ່ອງກັບ **ຂັ້ນຕອນການຄັດເລືອກທົ່ວໄປ** ແລະກົດໝາຍອື່ນໆ ທີ່ບັງຄັບໃຊ້ທັງໝົດຂອງຣັຖບານກາງ, ຣັຖ, ແລະທ້ອງຖິ່ນ;
- ເຈົ້າຂອງເຮືອນເຊົ່າຈະໃຫ້ໜັງສື **ແຈ້ງການປະຕິເສດ** ແກ່ຜູ້ສະໝັກພາຍໃນສອງອາທິດຂອງການປະຕິເສດ, ແລະລວມເຖິງ ຄຳອະທິບາຍມູນເຫດຂອງການປະຕິເສດ, ແລະຄຳອະທິບາຍເຫດຜົນທີ່ຫຼັກຖານເພີ່ມເຕີມນັ້ນບໍ່ສາມາດທົດແທນປັດໃຈຕ່າງໆ ໄດ້ຢ່າງພຽງພໍ ຊຶ່ງເປັນເຫດໃຫ້ເຈົ້າຂອງເຮືອນເຊົ່າຕັດສິນໃຈປະຕິເສດການສະໝັກນັ້ນ; ແລະ
- ໜັງສືແຈ້ງການປະຕິເສດແມ່ນອອກໂດຍເຈົ້າຂອງເຮືອນເຊົ່າເພື່ອໃຫ້ແກ່ຜູ້ສະໝັກ.

ຂໍ້ກຳນົດທັງໝົດຂອງເມືອງແມ່ນສ່ວນເສີມຕໍ່ຂໍ້ກຳນົດຂອງຣັຖ; ເບິ່ງ ORS 90.304.

ການສື່ສານເພື່ອບອກຜົນການພິຈາລະນາຕັດສິນ

ພາຍໃນ 2 ອາທິດຂອງການປະເມີນຜົນ , ເຈົ້າຂອງເຮືອນເຊົ່າ ຈຳເປັນຕ້ອງໃຫ້ **ໜັງສືແຈ້ງຜົນການພິຈາລະນາຕັດສິນ**—ຊຶ່ງໄດ້ແກ່ ການຍອມຮັບ, ການຍອມຮັບແບບມີເງື່ອນໄຂ, ຫຼື ການປະຕິເສດ. ໃນກໍລະນີຂອງການຍອມຮັບແບບມີເງື່ອນໄຂ ຫຼື ການປະຕິເສດ, ຕ້ອງອະທິບາຍພື້ນຖານໃນການຕັດສິນໃຈແນວນັ້ນ.

ຄຳຮ້ອງຂໍເອົາການດັດແປງເພື່ອໃຫ້ສະດວກຕໍ່ຄວາມພິການ ແລະ ການປະຕິເສດ

ຄຳຮ້ອງຂໍຂອງຜູ້ສະໝັກໃນການຂໍເອົາການດັດແປງທີ່ສົມເຫດຜົນ ຫຼື ການອຳນວຍຄວາມສະດວກໃຫ້ແກ່ຄວາມພິການ, ຫຼື ລັກສະນະຂອງການດັດແປງ ຫຼື ການອຳນວຍຄວາມສະດວກທີ່ຮ້ອງຂໍ, ຕ້ອງບໍ່ຖືເປັນປັດໃຈໃນການປະຕິເສດການສະໝັກ.

ນອກຈາກນີ້, ຜູ້ສະໝັກຕ້ອງບໍ່ຖືກປະຕິເສດທີ່ພັກອາໄສ ດ້ວຍເຫດຜົນດຽວທີ່ມາຈາກການປະຕິເສດຂອງເຈົ້າຂອງເຮືອນເຊົ່າຕໍ່ຄຳຮ້ອງຂໍເອົາການດັດແປງ. ຖ້າວ່າ ການດັດແປງທີ່ຮ້ອງຂໍນັ້ນຖືກປະຕິເສດ:

- ເຈົ້າຂອງເຮືອນເຊົ່າຕ້ອງໃຫ້ເວລາແກ່ຜູ້ສະໝັກຕໍ່ເນື່ອງກັນ 24 ຊົ່ວໂມງໃນການຮ້ອງຂໍເອົາການດັດແປງອື່ນແທນ.
- ຖ້າວ່າບໍ່ສາມາດເຮັດການດັດແປງໄດ້ຕາມສົມຄວນ, ຜູ້ສະໝັກ, ຖ້າວ່າມີເງື່ອນໄຂໄດ້ຮັບ, ສາມາດຍອມຮັບເອົາທີ່ພັກອາໄສທີ່ບໍ່ມີການດັດແປງເພື່ອຄວາມສະດວກ.

ຈະເຮັດແນວໃດ ຖ້າວ່າ ຜູ້ເຊົ່າທີ່ບໍ່ໄດ້ເປັນຜູ້ສະໝັກຖືກປະຕິເສດ?

ຖ້າວ່າ ຜູ້ສະໝັກມີເງື່ອນໄຂເໝາະສົມສຳລັບທີ່ພັກອາໄສ, ເຈົ້າຂອງເຮືອນເຊົ່າບໍ່ສາມາດປະຕິເສດຜູ້ສະໝັກ ເທິງພື້ນຖານການປະຕິເສດຜູ້ເຊົ່າທີ່ບໍ່ແມ່ນຜູ້ສະໝັກ ຊຶ່ງເປັນບຸກຄົນທີ່ຜູ້ສະໝັກໄດ້ໃສ່ຊື່ລົງໄວ້ໃນໃບສະໝັກດ້ວຍ. ແທນທີ່ນັ້ນ, ເຈົ້າຂອງເຮືອນເຊົ່າຈະຕ້ອງອະນຸຍາດໃຫ້ຜູ້ສະໝັກທີ່ມີເງື່ອນໄຂໄດ້ຮັບໃຫ້ຍອມຮັບເອົາທີ່ພັກອາໄສໂດຍບໍ່ຕ້ອງມີຜູ້ເຊົ່າທີ່ບໍ່ແມ່ນຜູ້ສະໝັກ.

ແຈ້ງການປະຕິເສດຕ້ອງປະກອບດ້ວຍຫຍັງແດ່?

ໜັງສືແຈ້ງການປະຕິເສດຕ້ອງເປັນໄປຕາມຂໍ້ກຳນົດຂອງ ORS 90.304, ແລະລວມມີເຫດຜົນສຳລັບການປະຕິເສດ. ຖ້າວ່ານຳໃຊ້ເກນການຄັດເລືອກແບບເຈົ້າຂອງເຮືອນເຊົ່າເລືອກເອງ, ຕ້ອງປະກອບດ້ວຍຄຳອະທິບາຍເຫດຜົນສຳລັບການປະຕິເສດ, ແລະຄຳອະທິບາຍເຫດຜົນທີ່ຫຼັກຖານເພີ່ມເຕີມນັ້ນບໍ່ສາມາດທົດແທນໄດ້ພຽງພໍສຳລັບປັດໃຈທີ່ເປັນເຫດໃຫ້ເຈົ້າຂອງຕັດສິນໃຈ.


B. ການອຸທອນ

ເຈົ້າຂອງເຮືອນເຊົ່າຈະຕ້ອງສະເໜີໂອກາດໃນການອຸທອນ, ເປັນເວລາ 30 ວັນຫຼັງຈາກປະຕິເສດການສະໝັກ. ຂັ້ນຕອນການອຸທອນຕ້ອງ:

1. ໃຫ້ໂອກາດໃນການແກ້ໄຂ, ພິສູດຫັກລ້າງ, ຫຼື ອະທິບາຍຂໍ້ມູນທີ່ເປັນລົບ ທີ່ເຮັດໃຫ້ເກີດການປະຕິເສດ;
2. ໃຫ້ຜູ້ສະໝັກມີເງື່ອນໄຂເໝາະສົມລ່ວງໜ້າໃນການເຊົ່າທີ່ພັກອາໄສຂອງເຈົ້າຂອງເຮືອນເຊົ່າເປັນເວລາ 3 ເດືອນຫຼັງຈາກວັນທີ່ທີ່ເຈົ້າຂອງເຮືອນເຊົ່າອະນຸມັດໃບສະໝັກທີ່ໄດ້ຮັບການກວດກາຄືນສຳລັບການອຸທອນ; ແລະ
3. ຍົກເວັ້ນຄ່າທຳນຽມການຄັດເລືອກໃຫ້ແກ່ຜູ້ສະໝັກເປັນເວລາ 3 ເດືອນ ຫຼັງຈາກອະນຸມັດໃຫ້ມີການອຸທອນໄດ້. ກ່ອນທີ່ຈະຍົກເວັ້ນຄ່າທຳນຽມການຄັດເລືອກ, ເຈົ້າຂອງເຮືອນເຊົ່າອາດຮຽກຮ້ອງໃຫ້ຜູ້ສະໝັກຮັບຮອງຕົນເອງວ່າ ບໍ່ມີການປ່ຽນແປງເງື່ອນໄຂຫຍັງໃນຂໍ້ມູນທີ່ອະທິບາຍໄວ້ໃນໃບສະໝັກທີ່ໄດ້ຮັບອະນຸມັດແລ້ວຂອງເຈົ້າຂອງເຮືອນເຊົ່າ.

C. ການອະນຸມັດ ແລະການຍອມຮັບ

ເມື່ອເຈົ້າຂອງເຮືອນເຊົ່າອະນຸມັດແລ້ວ ແລະຜູ້ສະໝັກຍອມຮັບທີ່ພັກອາໄສ, ເຈົ້າຂອງເຮືອນເຊົ່າ ແລະຜູ້ສະໝັກຈະຕ້ອງເຂົ້າສູ່ການເຮັດ **ສັນຍາເຊົ່າ**. ນອກຈາກນີ້, ເຈົ້າຂອງເຮືອນເຊົ່າອາດຮຽກຮ້ອງໃຫ້ຜູ້ເຊົ່າທີ່ເປັນຜູ້ໃຫຍ່ທຸກຄົນເຊັນຊື່ໃນ **ກົດລະບຽບການຢູ່ອາໄສ**.



ກົດໝາຍທີ່ຄວບຄຸມການສະໝັກ ແລະຂໍ້ກຳນົດການຄັດເລືອກ ສາມາດປ່ຽນແປງໄດ້. ເຈົ້າຂອງເຮືອນເຊົ່າ ແລະຜູ້ເຊົ່າ ຄວນກວດກາເບິ່ງກົດໝາຍຂອງລັດໃນປັດຈຸບັນ.

ການຍົກເວັ້ນ

ຂໍ້ກຳນົດເຫຼົ່ານີ້ນຳໃຊ້ບໍ່ໄດ້ກັບຂັ້ນຕອນການໃຫ້ເຊົ່າສຳລັບບັນດາທີ່ພັກອາໄສທີ່:

1. ຢູ່ພາຍໃຕ້ການຄວບຄຸມໃນຖານະເປັນທີ່ພັກອາໄສລາຄາຖືກ ໂດຍຣັຖບານກາງ ຫຼື ຣັຖບານທ້ອງຖິ່ນ ສຳລັບບັນດາຄົວເຮືອນທີ່ມີລາຍຮັບບໍ່ເກີນ 80 ເປີເຊັນຂອງເກນສະເຫຼ່ຍລາຍໄດ້ຄົວເຮືອນ ແລະຂຶ້ນກັບ ລະບົບການເຂົ້າເຖິງແບບມີການປະສານງານກັນຂອງມັລໂນມາ ຄາວຕີ້ ຫຼື ຂໍ້ຕົກລົງການສົ່ງຕໍ່ຜູ້ເຊົ່າທີ່ເປັນທາງການລະຫວ່າງເຈົ້າຂອງເຮືອນເຊົ່າ ແລະຜູ້ໃຫ້ບໍລິການທີ່ບໍ່ຫາຜົນກຳໄລ ຫຼື ອົງການຂອງຣັຖບານ ທີ່ເຮັດວຽກເພື່ອໃຫ້ບັນດາຜູ້ເຊົ່າທີ່ມີລາຍໄດ້ຕ່ຳ ຫຼື ດ້ອຍໂອກາດ ໄດ້ມີທີ່ພັກອາໄສ;
2. ບໍ່ໃຫ້ເຊົ່າສຳລັບ, ຫຼື ບໍ່ໂຄສະນາໃຫ້ເຊົ່າແກ່ປະຊາຊົນທົ່ວໄປ - ຊຶ່ງລວມເຖິງ ການໂຄສະນາທາງອອນລາຍພ້ອມກັບມີ ຫຼືບໍ່ມີຄ່າທຳນຽມ; ຫຼື
3. ໃຊ້ຮ່ວມກັບເຈົ້າຂອງເຮືອນເຊົ່າ ໃນການນຳໃຊ້ບ່ອນທີ່ພັກອາໄສເປັນບ່ອນຢູ່ຫຼັກ, ຊຶ່ງເປັນປະເພດບ່ອນຢູ່ອາໄສທີ່ກຳນົດໄວ້ໂດຍ PCC 33.910, ແລະບໍ່ແມ່ນໂດຍ ORS 90.100; ຫຼື ໃຊ້ຮ່ວມກັນກັບຜູ້ເຊົ່າໃນປັດຈຸບັນທີ່ມີສັນຍາເຊົ່າແຍກຕ່າງຫາກສຳລັບບ່ອນຢູ່ອາໄສບ່ອນດຽວກັນ, ຊຶ່ງເປັນປະເພດບ່ອນຢູ່ອາໄສທີ່ກຳນົດໄວ້ໂດຍ PCC 33.910, ແລະບໍ່ແມ່ນໂດຍ ORS 90.100, ຫຼື
4. ການເຊົ່າຢູ່ອາໄສທີ່ຜູ້ສະໝັກຈະເຂົ້າຢູ່ອາໄສໃນເຮືອນສຳລັບສອງຄອບຄົວ (Duplex) ຊຶ່ງບ່ອນຢູ່ອາໄສຫຼັກຂອງເຈົ້າຂອງເຮືອນເຊົ່າແມ່ນບ່ອນຢູ່ຫຼັງທີສອງໃນເຮືອນດຽວກັນນັ້ນ; ຫຼື
5. ການເຊົ່າຢູ່ອາໄສທີ່ຜູ້ສະໝັກຈະເຂົ້າຢູ່ອາໄສໃນເຮືອນນ້ອຍເສີມ (Accessory Dwelling Unit), ຕາມທີ່ອະທິບາຍໄວ້ໂດຍ PCC 33.205, ຊຶ່ງຂຶ້ນຢູ່ກັບກົດໝາຍໃນເມືອງພອທແລນດ໌ ຕາບໃດທີ່ເຈົ້າຂອງທີ່ພັກອາໄສດັ່ງກ່າວນັ້ນອາໄສຢູ່ໃນພື້ນທີ່ດຽວກັນ, ຫຼື ການເຊົ່າຢູ່ອາໄສທີ່ເຈົ້າຂອງຢູ່ອາໄສໃນເຮືອນນ້ອຍເສີມ ແລະບ່ອນຢູ່ທີ່ຜູ້ສະໝັກຈະເຂົ້າຢູ່ນັ້ນກໍຢູ່ໃນພື້ນທີ່ດຽວກັນດ້ວຍ.

ໝາຍເຫດ: ຢູ່ໃສກໍຕາມ ເມື່ອຂໍ້ກຳນົດຂອງກອງທຶນ ຫຼື ເງິນກູ້ໃນທ້ອງຖິ່ນ, ຣັຖ, ຫຼື ຣັຖບານກາງ ສຳລັບການຄັດເລືອກຜູ້ເຊົ່າ ຂັດແຍ້ງກັບສ່ວນໃດໜຶ່ງຂອງມາດຕາ 30.01.086, ຂໍ້ກຳນົດຂອງກອງທຶນ ຫຼື ເງິນກູ້ນັ້ນຈະມີຄວາມສຳຄັນເໜືອກວ່າສະເພາະສ່ວນເຫຼົ່ານັ້ນທີ່ຂັດແຍ້ງ.

ການບົກຜ່ອງບໍ່ປະຕິບັດຕາມ

ເຈົ້າຂອງເຮືອນເຊົ່າທີ່ບໍ່ປະຕິບັດຕາມສ່ວນໃດໆ ຂອງຂໍ້ກຳນົດນີ້ ຈະຕ້ອງຮັບຜິດຊອບຕໍ່ຜູ້ສະໝັກເປັນເງິນສູງເຖິງ $250 ຕໍ່ການລະເມີດ ບວກກັບຄວາມເສັຽຫາຍຕົວຈິງ, ຄ່າທະນາຍຄວາມທີ່ສົມເຫດຜົນ ແລະຄ່າໃຊ້ຈ່າຍຕ່າງໆ. ຜູ້ສະໝັກໃດໆ ກໍຕາມທີ່ໄດ້ຮັບຄວາມເສັຽຫາຍທາງວັດຖຸໂດຍການເຈດຕະນາບໍ່ປະຕິບັດຕາມຂອງເຈົ້າຂອງເຮືອນເຊົ່າ ມີສິດທີ່ຈະຟ້ອງຮ້ອງໃນເຂດສານໃດໆ ສຳລັບຄວາມເສັຽຫາຍ ແລະການເຍີຍວຍາອື່ນໆ, ຕາມຄວາມເໝາະສົມ.

EQUAL HOUSING OPPORTUNITY

ຖ້າວ່າ ທ່ານເຊື່ອວ່າ ທ່ານຖືກຂົ່ມເຫັງ ຫຼື ຖືກຈຳແນກ ເນື່ອງຈາກເຊື້ອຊາດ, ສີຜິວ, ຊາດກຳເນີດ, ສາສະໜາ, ເພດ, ສະຖານະທາງການເງິນ, ຄວາມພິການ, ສະຖານະການແຕ່ງງານ, ແຫຼ່ງລາຍໄດ້, ຄວາມມັກຊອບທາງເພດ ລວມເຖິງ ລັກສະນະຕ໊ອມ໋ທາງເພດ, ຄວາມຮຸນແຮງໃນຄອບຄົວ, ປະເພດຂອງອາຊີບ, ຫຼື ອາຍຸເກີນ 18 ປີ ທ່ານສາມາດຊອກຫາຄຳແນະນຳທາງກົດໝາຍກ່ຽວກັບສິດທິຂອງທ່ານ ພາຍໃຕ້ກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມ.

ສຳລັບການແປພາສາ ຫຼື ນາຍພາສາ, ກະລຸນາໂທຣ 503-823-1303

TTY ທີ່ເບີ 503-823-6868 ຫຼື ບໍລິການສົ່ງຕໍ່ຂໍ້ຄວາມຂອງຣັຖອໍຣິກອນ ທີ່ 711

503-823-1303 Traducción e interpretación
Chuyển Ngữ hoặc Phiên Dịch | 翻译或传译
Письменный или устный перевод | 翻訳または通訳
Traducere sau Interpretare | 번역 및 통역
Письмовий або усний переклад | Turjumida ama Fasiraadda
الترجمة التحريرية والشفوية| ການແປພາສາ ຫຼື ການອະທິບາຍ

ຂໍ້ກຳນົດນີ້ແມ່ນເພີ່ມເຕີມຕໍ່ສິດທິແລະຄວາມຮັບຜິດຊອບອື່ນໃດ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍເຈົ້າຂອງເຮືອນເຊົ່າແລະຜູ້ເຊົ່າສຳລັບທີ່ພັກອາໄສໃນຣັຖອໍຣິກອນ (Oregon Residential Landlord and Tenant Act) ພາຍໃຕ້ ຣັຖບັນຍັດສະບັບແກ້ໄຂຣັຖອໍຣິກອນ ບົດທີ 90 ແລະ ກົດໝາຍວ່າດ້ວຍເຈົ້າຂອງເຮືອນເຊົ່າ-ຜູ້ເຊົ່າ ພາຍໃຕ້ກົດລະບຽບເມືອງພອທແລນດ໌ ຫົວຂໍ້ທີ 30.

ຂໍ້ມູນໃນຟອມນີ້ແມ່ນເພື່ອຈຸດປະສົງໃນການໃຫ້ຄວາມຮູ້ເທົ່ານັ້ນ. ທ່ານຄວນກວດກາຄືນຣັຖບັນຍັດທີ່ເໝາະສົມຂອງຣັຖ, ກົດຂອງເມືອງ, ແລະກົດລະບຽບການບໍລິຫານ ຕາມຄວາມຈຳເປັນ. ຖ້າວ່າ ທ່ານຕ້ອງການຄຳແນະນຳທາງກົດໝາຍ, ຫຼື ກຳລັງພິຈາລະນາດຳເນີນການທາງກົດໝາຍ, ທ່ານຄວນຕິດຕໍ່ທະນາຍຄວາມ.

ຊອກເບິ່ງກົດລະບຽບການບໍລິຫານສະບັບເຕັມ, ຟອມຕ່າງໆ ແລະເອກະສານອື່ນໆ ທາງອອນລາຍທີ່

portland.gov/rso/application-screening

ມີຄຳຖາມບໍ່?

ຖ້າວ່າ ທ່ານເປັນເຈົ້າຂອງເຮືອນເຊົ່າ ຫຼື ຜູ້ເຊົ່າ ທີ່ມີຄຳຖາມ ຫຼື ຂໍ້ກັງວົນໃຈກ່ຽວກັບກົດຄຳສັ່ງດ້ານການສະໝັກ ແລະການຄັດເລືອກ, ຫຼື ກຳລັງຊອກຫາແນວທາງທົ່ວໄປ, ຂໍໃຫ້ຕິດຕໍ່ ຫ້ອງການບໍລິການດ້ານການເຊົ່າ ຂອງ PHB. ໂທຣະສັບ, ອີເມວ, ຫຼື ໄປພົບດ້ວຍຕົນເອງ ໃນລະຫວ່າງຊົ່ວໂມງບໍລິການ.

ຫ້ອງການບໍລິການດ້ານການເຊົ່າ ພະແນກຊ່ວຍເຫຼືອ

ໂທຣະສັບ	503-823-1303
ອີເມວ	rentalservices@portlandoregon.gov
ອອນລາຍ	portland.gov/rso
ໄປພົບດ້ວຍຕົນເອງ	421 SW 6th Avenue, Suite 500 Portland, Oregon 97204
ຊົ່ວໂມງ	ທຸກວັນຈັນ, ວັນພຸດ ແລະ ວັນສຸກ 9-11:00ໂມງເຊົ້າ *ແລະ* 1-4:00ໂມງບ່າຍ

---

*ເຈົ້າໜ້າທີ່ທີ່ **ຫ້ອງການບໍລິການດ້ານການເຊົ່າ** ຈະໃຫ້ຂໍ້ມູນກ່ຽວກັບ ກົດໝາຍຂອງເມືອງ ແລະນະໂຍບາຍ, ແລະແນະນຳຕໍ່ໄປຫາຂໍ້ມູນ ແລະແຫຼ່ງຊ່ວຍເຫຼືອອື່ນໆ. ຢ່າງໃດກໍຕາມ, ເຂົາເຈົ້າບໍ່ສາມາດສະເໜີໃຫ້ຄຳແນະນຳທາງກົດໝາຍ ຫຼື ບໍ່ສາມາດບອກໄດ້ວ່າ ຄວນເຮັດແນວໃດໃນສະຖານະການໃດໜຶ່ງ.*

ຕີພິມ **ມີນາ 2020**